ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ: 2987 /ກປ

ນະຄອນຫຼວງວຽງຈັນ, ວັນທີ: 28. ມິຖຸນາ 2019

# ຂໍ້ຕົກລົງ

## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ບັນຊີພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ທີ່ຕ້ອງຂໍອະນຸຍາດກ່ອນການນຳເຂົ້າ ສປປ ລາວ ໂດຍຜ່ານການວິໄຈຄວາມສ່ຽງສັດຕູພືດ

- ອີງຕາມ ກົດໝາຍວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ (ສະບັບປັບປຸງ) ສະບັບເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016.
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 99/ນຍ, ລົງວັນທີ 09 ມີນາ 2017.
- ອີງຕາມ ໜັງສືສະເໜີຂອງກົມປູກຝັງ ສະບັບເລກທີ 1045/ກປຝ, ລົງວັນທີ 22 ພຶດສະພາ 2019.

### ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ຕົກລົງ:

ມາດຕາ 1. ຮັບຮອງ ແລະ ປະກາດໃຊ້ບັນຊີພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ທີ່ຕ້ອງຂໍອະນຸຍາດນຳເຂົ້າ ໂດຍຜ່ານການວິໄຈຄວາມສ່ຽງສັດຕູພືດ ຈຳນວນ 136 ລາຍການ ຕາມເອກະສານຊ້ອນທ້າຍ "ກ" ຂອງຂໍ້ຕົກລົງສະບັບນີ້.

ມາດຕາ 2. ມອບໃຫ້ກົມປູກຝັງ ແຈ້ງໃຫ້ອົງການປ້ອງກັນພືດແຫ່ງຊາດ (NPPO) ຂອງປະເທດສົ່ງອອກ ຫຼື ປະເທດຄູ່ຄ້າຮັບຊາບ.

- ອອກຄຳແນະນຳດ້ານວິຊາການ, ສົມທົບກັບພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ, ດ່ານກັກກັນພືດ ໃນຂອບເຂດທົ່ວປະເທດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເຜີຍແຜ່ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ມາດຕາ 3. ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຮກ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້

ບຸນຂວາງ ຄຳບຸນເຮືອງ

Scanned with CamScanner

**ເອກະສານຊ້ອນທ້າຍ ກ.** ບັນຊີ ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ທີ່ຕ້ອງຂໍອະນຸຍາດນຳເຂົ້າ ສປປ ລາວ ໂດຍການວິໄຈຄວາມສ່ຽງສັດຕູພືດ

| ລ/ດ | ຊື່ພາສາລາວ | ຊື່ວິທະຍາສາດ | ຊື່ພາສາອັງກິດ |
|---|---|---|---|
| **I.** | **ປະເພດພືດ ແລະ ຜະລິດຕະພັນພືດທົ່ວໄປ** | | |
| 1 | ເຂົ້າ | *Oryza sativa* L. | Rice |
| 2 | ສາລີ | *Zea maize* L. | Maize, corn |
| 3 | ໝາກຖົ່ວເບີ | *Phaseolus* spp. | Green bean |
| 4 | ກາເຟ | *Coffea* spp. | Coffee |
| 5 | ໝາກງາ | *Sesamum indicum* L. | Sesame |
| 6 | ໝາກເດືອຍ | *Coix* spp. | Job's tears |
| 7 | ມັນຕົ້ນ | *Manihot esculenta* C. | Cassava |
| 8 | ຢາງພາລາ | *Hevea* spp. | Rubber |
| 9 | ອ້ອຍ | *Saccharum officinarum* L. | Sugarcane |
| 10 | ມັນດ້າງ | *Ipomoea batatas* (L.) | Sweet potato |
| 11 | ຢາສູບ | *Nicotiana tabacum* L. | Tobacco |
| 12 | ໝາກແໜ່ງ | *Amomum* spp. | Cardamom |
| 13 | ຊາ | *Camellia* L. | Tea |
| 14 | ຖົ່ວເຫຼືອງ | *Glycine max* (L.) | Soybean |
| 15 | ຖົ່ວຂຽວ | *Vigna radiata* L. | Mungbean |
| 16 | ຝ້າຍ | *Gossypium* spp. | Cotton |
| 17 | ເຜືອກ | *Colocasia esculenta* L. | Taro |
| 18 | ປໍສາ | *Broussonetia papyrifera* (L.) | Paper mulberry |
| 19 | ໝາກມ່ວງຫິມະພານ | *Anacardium occidentale* L. | Cashew nut |
| 20 | ປາມ | *Areca catechu* L. | Betel nut palm |
| 21 | ແປ້ງຈາກພືດ | N/A | Powder from plant products |
| 22 | ຜະລິດຕະພັນຈາກຢາງພາລາ | N/A | Rubber products |
| 23 | ຜະລິດຕະພັນຈາກຢາສູບ | N/A | Tobacco products |
| 24 | ຮໍາສະກັດ | N/A | Bran extract |



Scanned with CamScanner

| | | | |
|---|---|---|---|
| 25 | ກາກຖົ່ວເຫຼືອງ | N/A | Soybean meal |
| 26 | ກາກສາລີ | N/A | Maize meal |
| 27 | ກາກຄາໂນລ້າ | N/A | Canola meal |
| 28 | ນ້ຳມັນຮຳ | N/A | Rice bran oil |
| 29 | ຮຳອ່ອນ | N/A | Rice bran |
| 30 | ກາກປາມ | N/A | Palm meal |
| 31 | ກາກພືດຜັກ | N/A | Indian Rape Seed Meal |
| | II. **ປະເພດໝາກໄມ້** | | |
| 32 | ໝາກນອດ | *Passiflora* spp. | Passion fruit |
| 33 | ໝາກກີວີ | *Actinidia* spp. | Kiwi |
| 34 | ໝາກນັດ | *Ananas comosus* (L.) | Pineapple |
| 35 | ໝາກກ້ວຍ | *Musa* spp. | Bananas |
| 36 | ໝາກ ນາວ, ກ້ຽງ, ຂີ້ຫູດ... | *Citrus* spp. | Pomelo, Lemon, Lime, Bergamot... |
| 37 | ໝາກແອບເປີ້ນ | *Malus* spp. | Apples |
| 38 | ໝາກພິລາ | *Punica granatum* L. | Pomegranate |
| 39 | ໝາກມັງກອນ | *Hylocereus* spp. | Dragon fruit |
| 40 | ໝາກລຳໄຍ | *Euphoria longana* (L.) | Longan |
| 41 | ໝາກມ່ວງ | *Mangifera indica* L. | Mango |
| 42 | ໝາກຂາມ | *Tamarindus indica* L. | Tamarind |
| 43 | ໝາກກະທັນ | *Zizyphus mauritiana* L. | Jujube |
| 44 | ໝາກສີດາ | *Psidium guajava* L. | Guava |
| 45 | ໝາກເງາະ | *Nephelium lappaceum* L. | Rambutan |
| 46 | ໝາກລອງກ່ອງ | *Lansium domesticum* C. | Langsat |
| 47 | ໝາກພັບ | *Diospyros* spp. | Persimmon |
| 48 | ໝາກພ້າວ | *Cocos nucifera* L. | Coconut |
| 49 | ໝາກໂມ | *Citrullus lanatus* (T.) | Water melon |
| 50 | ໝາກຖົ່ວລຽນ | *Durio zibethinus* L. | Durian |
| 51 | ໝາກມັງຄຸດ | *Garcinia mangostana* L. | Mangosteen |



Scanned with CamScanner

| | | | |
|---|---|---|---|
| 52 | ໝາກລະແຊງ (ໝາກອາງຸ່ນ) | *Vitis vinifera* L. | Grape |
| 53 | ໝາກລິນຈີ່ | *Litchi chinensis* S. | Lychee |
| 54 | ໝາກສາລີ່ | *Pyrus pyrifolia* (B.) | Chinese pear |
| 55 | ໝາກຂຽບ | *Annona squamosa* L. | Sugar apple |
| 56 | ໝາກຂຽບຝຣັ່ງ | *Annona muricata* L. | Soursop |
| 57 | ໝາກບຸເບີລີ່ | *Vaccinium* L. | Blueberry |
| 58 | ໝາກເຊີລີ່ | *Prunus* L. | Cherry |
| 59 | ລັດສະເບີລີ່ | *Rubus* spp. | Raspberry |
| 60 | ໝາກນ້ຳນົມ | *Chrysophyllum* spp. | Cainito |
| 61 | ໝາກມອນໄຂ່ | *Pouteria* spp. | Egg fruit |
| 62 | ໝາກໄຟ | *Baccaurea ramiflora* L. | Burmese grape |
| 63 | ໝາກອາໂວຄາໂດ້ | *Persea* spp. | Avocadoes |
| 64 | ໝາກຈັບ | *Trapa natans* L. | Water caltrop |
| 65 | ໝາກແຫ້ວ | *Eleocharis dulcis* L. | Water chestnut |
| 66 | ໝາກຮຸ່ງ | *Carica* spp. | Papaya |
| 67 | ໝາກຂາມປ້ອມ | *Phyllanthus emblica* L. | Emblica |
| 68 | ໝາກເຟືອງ | *Averrhoa* spp. | Star fruit |
| 69 | ໝາກຕານ | *Borassus* spp. | Sugar palm |
| 70 | ໝາກຕາວ | *Arenga* spp. | Sugar Palm fruit |
| 71 | ໝາກພຣຸນ | *Prunus* spp. | Prune |
| 72 | ໝາກຜູ, ໝາກຜາງ | *Bouea* spp. | Sweet and sour marian plum |
| 73 | ໝາກມີ້ | *Artocarpus* spp. | Jackfruits |
| 74 | ໝາກແຕງ | *Cucumis melon* L. | Melon |
| 75 | ໝາກມອນ | *Morus nigra* L. | Mulberry |
| 76 | ໝາກລະມຸດ | *Manilkara zapota* L. | Sapodilla |
| 77 | ໝາກຕ້ອງ | *Sandoricum koetjape* (B.) | Santol |
| 78 | ໝາກຕູມ | *Aegle marmelos* (L.) | Bael fruit |
| 79 | ໝາກຈຽງ | *Eugenia* spp. | Rose apples |



Scanned with CamScanner

| | | | |
|---|---|---|---|
| 80 | ໝາກສະຕໍເບີລີ້ | *Fragaria* L. | Strawberries |
| | **III. ປະເພດພືດຜັກ** | | |
| 81 | ຜັກບົ່ວໃບ | *Allium cepa* L. | Onion |
| 82 | ຜັກກະທຽມ | *Allium sativum* L. | Garlic |
| 83 | ຫົວກະລົດ | *Daucus carota* L. | Carrot |
| 84 | ຫົວມັນຝຣັ່ງ | *Solanum tuberosum* L. | Potato |
| 85 | ໝາກເຜັດ | *Capsicum* L. | Chilli |
| 86 | ໝາກອຶ | *Cucurbita* L. | Pumpkin |
| 87 | ໝາກເລັ່ນ | *Solanum lycopersicum* L. | Tomato |
| 88 | ໃບຂີ້ຫູດ | *Citrus hystrix* DC. | Kaffir lime |
| 89 | ຫອມປ້ອມ | *Coriandrum sativum* L. | Coriander |
| 90 | ຫອມເປ | *Eryngium foetidum* L. | Long coriander |
| 91 | ຜັກຊີ | *Coriander confitti* L. | Coriander |
| 92 | ພິກໄທ | *Piper* L. | Peppers |
| 93 | ໜໍ່ໄມ້ຝຣັ່ງ | *Asparagus officinalis* L. | Asparagus |
| 94 | ຜັກບົວລະພາ | *Ocimum basilicum* L. | Basil |
| 95 | ຜັກບົ້ງ | *Ipomoea aquatic* F. | Water spinach |
| 96 | ຜັກຕະກູນກະລໍ່າ | *Brassica* spp. | Cabbages |
| 97 | ຜັກຫອມລາບ | *Metha spicata* L. | Mint |
| 98 | ຕະກູນໝາກໂຕ່ນ, ໝາກນໍ້າ | *Benincase* spp. | Wax gourd... |
| 99 | ໝາກເຂືອ | *Solanum melongena* L. | Egg plant |
| 100 | ຕະກູນໝາກຖົ່ວ | *Vigna* spp. | Beans... |
| 101 | ຜັກສະນາລີ້ | *Apium graveolens* L. | Cerely |
| 102 | ໝາກບວບ, ໝາກນອຍ | *Luffs* spp. | Sponge gourd |
| 103 | ໃບເຕີຍ | *Pandanus* spp. | Pandan |
| **IV.** | **ປະເພດແນວພັນພືດ** | | |
| 104 | ເບ້ຍໝາກອາໂວຄາໂດ້ | *Persea* spp. | Avocado |
| 105 | ເບ້ຍໝາກມ່ວງ | *Mangifera indica* L. | Mango |



Scanned with CamScanner

| | | | |
|---|---|---|---|
| 106 | ໝາກຖົ່ວລຽນ | *Durio zibethinus L.* | Durian |
| 107 | ເບ້ຍໝາກກ້ຽງທຸກຊະນິດ | *Citrus* spp. | Pummelo, Lemon, Lime, Bergamot.. |
| 108 | ເບ້ຍໝາກນອດ | *Passiflora* spp. | Passion fruit |
| 109 | ເບ້ຍໝາກພ້າວ | *Cocos nucifera* L. | Coconut |
| 110 | ເບ້ຍໝາກແໜ່ງ | *Amomum villosum* L. | Cardamon |
| 111 | ເບ້ຍໝາກກາເຟ | *Coffea* spp. | Coffee |
| 112 | ທ່ອນພັນມັນຕົ້ນ | *Manihotes culenta* C. | Cassava |
| 113 | ເບ້ຍໄມ້ປ່ອງ | *Bambuseae* | Bamboo |
| 114 | ແນວພັນສາລີ | *Zea may* L. | Maize, sweet corn |
| 115 | ແນວພັນເຂົ້າ | *Oryza sativa* L. | Rice |
| 116 | ແນວພັນຂີງ | *Zingiber officinale* R. | Ginger |
| 117 | ແນວພັນໝາກເດືອຍ | *Coix* spp. | Job's tear |
| 118 | ແກ່ນດອກຕາເວັນ | *Helianthus annuus* L. | Sunflower |
| 119 | ແນວພັນຖົ່ວເຫຼືອງ | *Glycine max* (L.) | Soybean |
| 120 | ແນວພັນຖົ່ວດິນ | *Arachis hypogaea* L. | Peanut |
| 121 | ແນວພັນຖົ່ວຂຽວ | *Vigna radiata* (L.) | Mung bean |
| 122 | ແນວພັນຖົ່ວເບີ | *Phaseolus vulgaris* L. | Bean |
| 123 | ແນວພັນລະແຊງ | *Vitis* spp. | Grapes |
| 124 | ແນວພັນກ້ວຍ | *Musa* spp. | Bananas |
| 125 | ແນວພັນອ້ອຍ | *Saccharum* spp. | Sugarcanes |
| 126 | ແນວພັນມັນດ້າງ | *Ipomoea batata* (L.) | Sweet potatoes |
| 127 | ແນວພັນໝາກອຶ | *Cucurbita* spp. | Pumpkins |
| 128 | ແນວພັນໝາກຈຽງ | *Syzygium* spp. | Roseapples |
| 129 | ແນວພັນໝາກມ່ວງຫິມະພານ | *Anacardium occidentale* L. | Cashew nut |
| 130 | ແນວພັນຫຍ້າຕ່າງໆ | *Poaceae* | Grasses |
| 131 | ແນວພັນໄມ້ເກດສະໜາ | *Aquilaria crassna* L. | Agar wood |
| 132 | ແນວພັນ ແລະ ເມັດພັນຜັກທຸກຊະນິດ | N/A | Vegetable seeds |



Scanned with CamScanner

| | | |
|---|---|---|
| V. ປະເພດພືດເປັນຢາສະໝຸນໄພ | | |
| 133 | ພືດສະໝຸນໄພ (ບັນຊີພືດສະໝຸນໄພຄວບຄຸມທີ່ກຳນົດໂດຍກະຊວງສາທາລະນະສຸກຂອງສປປລາວ) | Herbs, medicinal plants |
| 134 | ປະເພດເຫັດທຸກຊະນິດ | Mushrooms |
| VI. ປະເພດເບ້ຍໄມ້ດອກໄມ້ປະດັບ ແລະ ພືດ ຫຼື ແນວພັນພືດ ຊະນິດໃໝ່ | | |
| 135 | ເບ້ຍໄມ້ດອກໄມ້ປະດັບທຸກຊະນິດສຳລັບປູກ, ລວມທັງເປັນຜົນຜະລິດ | All flower species |
| 136 | ພືດ ແລະ ຜະລິດຕະພັນພືດໃໝ່ ລວມທັງແນວພັນ ແລະ ເມັດພັນພືດໃໝ່ທີ່ບໍ່ມີໃນສປປລາວ ຫຼື ບໍ່ເຄີຍມີການນຳເຂົ້າມາກ່ອນ | All new plant/plant products, seeds, varieties have never been introduced into Lao PDR before |

**ໝາຍເຫດ:**

1. N/A ບໍ່ມີຂໍ້ມູນທາງດ້ານ ຊື່ວິທະຍາສາດພືດ;
2. ພືດ, ຜະລິດຕະພັນພືດ ແລະ ວັດຖຸຕ້ອງຄວບຄຸມ ທີ່ຍົກເວັ້ນການຂໍອະນຸຍາດນຳເຂົ້າ ໂດຍບໍ່ຜ່ານການວິໄຈຄວາມສ່ຽງສັດຕູພືດ ຕ້ອງມີສະພາບ ແລະ ເງື່ອນໄຂ ດັ່ງນີ້:
    - ເປັນອາຫານທີ່ຜ່ານການປຸງແຕ່ງສຳເລັດຮູບ;
    - ຝຸ່ນອິງຄະທາດ ທີ່ຜະລິດຈາກສິ່ງເສດເຫຼືອຂອງ ພືດ ຜະລິດຕະພັນພືດ;
    - ໝາກໄມ້ທີ່ຜ່ານການແຊ່ແຂງ ໃນອຸນຫະພູມ -17.8 ℃ (0 ℉) ແລະ ອຸນຫະພູມທີ່ໃຊ້ ຕ້ອງພິມລົງ ໃນໃບຢັ້ງຢືນສຸຂານາໄມພືດ ໂດຍຜ່ານການກວດກາ ແລະ ຢັ້ງຢືນ ຈາກເຈົ້າໜ້າທີ່ກັກກັນພືດປະຈຳດ່ານນຳເຂົ້າ ທຸກຄັ້ງ.



Scanned with CamScanner